# Law on Investment Promotion

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 3
## Form of investment
## ຮູບການ ການລົງທຶນ

ຈຸດປະສົງຂອງການສຶກສາໃນບົດນີ້ແມ່ນເພື່ອໃຫ້ຜູ້ຮຽນເຂົ້າໃຈກ່ຽວກັບຮູບການການລົງທຶນ ຕາມກົດໝາຍສົ່ງເສີມການລົງທຶນຂອງ ສປປ ລາວ, ຜ່ານການສຶກສາ ນັກສຶກສາຈະສາມາດຈຳແນກໄດ້ລະຫວ່າງຮູບການການລົງທຶນມີຈັກຮູບການ ແລະ ຈະເປັນທາງເລືອກໃຫ້ຜູ້ຮຽນວ່າຄວນຈະລົງທຶນໃນຮູບການໃດ ຈຶ່ງຈະເໝາະສົມ ແລະ ແທດເໝາະກັບຕົວຈິງໃນການລົງທຶນຢູ່ ສປປ ລາວ.

ເນື້ອໃນຂອງບົດຮຽນຈະໄດ້ສຶກສາລົງເລິກກ່ຽວກັບ:

ຮູບການການລົງທຶນ ເປັນຕົ້ນແມ່ນ, ການລົງທຶນຝ່າຍດຽວຂອງຜູ້ລົງທຶນພາຍໃນ ຫຼື ຕ່າງປະເທດ, ການລົງທຶນຮ່ວມລະຫວ່າງ ຜູ້ລົງທຶນພາຍໃນກັບຕ່າງປະເທດ, ການລົງທຶນທຸລະກິດຮ່ວມຕາມສັນຍາ, ການລົງທຶນຮ່ວມລະຫວ່າງລັດວິສາຫະກິດ ແລະ ວິສາຫະກິດເອກະຊົນ, ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

ກ່ຽວກັບຮູບການ ການລົງທຶນຢູ່ ສປປ ລາວ, ຜູ້ລົງທຶນສາມາດລົງທຶນທາງກົງ ຫຼື ທາງອ້ອມດ້ວຍຫຼາຍຮູບການທີ່ແຕກຕ່າງກັນໃນກົດໝາຍການສົ່ງເສີມການລົງທຶນປີ 2009 ໄດ້ກຳນົດມີ 3 ຮູບການ ແລະ ໃນກົດໝາຍສົ່ງເສີມການລົງທຶນປີ 2016ມີ 5 ຮູບການ[1] ແລະ ຢູ່ພາຍໃຕ້ກົດໝາຍຂອງ ສປປ ລາວ.

### 1. ການລົງທຶນຝ່າຍດຽວຂອງຜູ້ລົງທຶນພາຍໃນ ຫຼື ຕ່າງປະເທດ

ການລົງທຶນຝ່າຍດຽວຂອງຜູ້ລົງທຶນພາຍໃນ ຫຼື ຕ່າງປະເທດ ເປັນການລົງທຶນຊຶ່ງອາດຈະມີຜູ້ລົງທຶນພາຍໃນ ຫຼື ຕ່າງປະເທດຝ່າຍດຽວ, ຜູ້ດຽວ ຫຼື ຫຼາຍຄົນໃນກິດຈະການ ຫຼື ໂຄງການໃດໜຶ່ງຂອງ ສປປ ລາວ, ການລົງທຶນໃນຮູບແບບນີ້ຕ້ອງເປັນການລົງທຶນ 100% (ການລົງທຶນຝ່າຍດຽວຂອງຜູ້ລົງທຶນພາຍໃນ ຫຼື ຕ່າງປະເທດ) ໂດຍການນຳ ເອົາທຶນຮອນ, ຊັບສິນທີ່ເປັນກຳມະສິດຂອງຜູ້ລົງທຶນເອງ ເພື່ອດຳເນີນກິດຈະການ ຫຼື ສ້າງຕັ້ງວິສາຫະກິດໃນ ສປປ ລາວພາຍໃຕ້ລະບຽບການ ແລະ ກົດໝາຍຂອງ ສປປ ລາວ ໃນນັ້ນ ອາດຈະສ້າງຕັ້ງເປັນບໍລິສັດຈຳກັດ, ບໍລິສັດຫຸ້ນ ສ່ວນ.... ແລະ ມີຄວາມຮັບຜິດຊອບຕໍ່ໝາກຜົນທີ່ເກີດຈາກການລົງທຶນດັ່ງກ່າວ.

"ການລົງທຶນຝ່າຍດຽວຂອງຜູ້ລົງທຶນພາຍໃນ ຫຼື ຕ່າງປະເທດໝາຍເຖິງ ການລົງທຶນຂອງນັກທຸລະກິດພາຍ ໃນລົງທຶນຜູ້ໜຶ່ງຜູ້ດຽວ ຫຼື ຫຼາຍຄົນໂດຍບໍ່ມີການຮ່ວມທຶນກັບຕ່າງປະເທດ ຫຼື ການລົງທຶນຝ່າຍດຽວຂອງ ຜູ້ລົງທຶນຕ່າງປະເທດໂດຍລົງທຶນຜູ້ໜຶ່ງຜູ້ດຽວ ຫຼື ຫຼາຍຄົນໃນກິດຈະການໜຶ່ງ ຫຼື ໃນໂຄງການໃດໜຶ່ງຢູ່ໃນ ສປປ ລາວ"[2].

---

[1] ພາກທີ II ກົດໝາຍສົ່ງເສີມການລົງທຶນປີ 2009 ແລະ ພາກທີ III  ໝວດທີ 1 ກົດໝາຍສົ່ງເສີມການລົງທຶນ 2016.

[2] ວິຊາກົດໝາຍວ່າດ້ວຍການລົງທຶນ, ມະຫາວິທະຍາໄລແຫ່ງຊາດ, ຄະນະນິຕິສາດ ແລະ ລັດຖະສາດ 2009-2010, ໜ້າທີ 26.

**2. ການລົງທຶນຮ່ວມ ລະຫວ່າງ ຜູ້ລົງທຶນພາຍໃນກັບຕ່າງປະເທດ**

ການລົງທຶນຮ່ວມ ລະຫວ່າງ ຜູ້ລົງທຶນພາຍໃນ ຫຼື ຕ່າງປະເທດ ເປັນການລົງທຶນຂອງຜູ້ລົງທຶນຕ່າງປະເທດທີ່ຮ່ວມກັບຜູ້ລົງທຶນພາຍໃນປະເທດ ຫຼື ຜູ້ລົງທຶນຢູ່ ສປປ ລາວ ເພື່ອດຳເນີນກິດຈະການ ຫຼື ໂຄງການອັນໃດໜຶ່ງທີ່ມີ ຜົນຕອບແທນທາງກຳໄລ ຫຼື ຜົນປະໂຫຍດຮ່ວມກັນທັງສອງຝ່າຍ, ແຕ່ລະຝ່າຍມີກຳມະສິດຮ່ວມກັນ ໃນກິດຈະການລົງທຶນດັ່ງກ່າວ, ຜູ້ລົງທຶນຮ່ວມທັງສອງຝ່າຍຖືວ່າເປັນນິຕິບຸກຄົນຕາມກົດໝາຍຂອງ ສປປ ລາວ ບັນດາການຈັດຕັ້ງ, ເຄື່ອນໄຫວ, ສິດ ແລະ ພັນທະ, ການບໍລິຫານຄຸ້ມຄອງຂອງຜູ້ລົງທຶນຮ່ວມ ແມ່ນຈະມີການກຳນົດໄວ້ໃນສັນຍາຮ່ວມ ທຶນຂອງສອງຝ່າຍ ແລະ ພາຍໃຕ້ລະບຽບກົດລະບຽບຂອງນິຕິບຸກຄົນໃໝ່.

ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນປີ 2016, ມາດຕາ 28, ວັກທີ 3 ໄດ້ກຳນົດວ່າ "ສຳລັບຜູ້ລົງທຶນຕ່າງປະເທດ ທີ່ລົງທຶນໃນຮູບການດັ່ງກ່າວຕ້ອງປະກອບທຶນຢ່າງໜ້ອຍບໍ່ໃຫ້ຫຼຸດ 10% ຂອງທຶນທັງໝົດ.

ການລົງທຶນແບບຮຸ້ນສ່ວນລະຫວ່າງຜູ້ລົງທຶນພາຍໃນກັບຜູ້ລົງທຶນຕ່າງປະເທດເຊິ່ງຮ່ວມທຶນກັນດຳເນີນທຸລະ ກິດ, ມີກຳມະສິດຮ່ວມກັນ ແລະ ສ້າງເປັນຕິນິບຸກຄົນໃໝ່ຂຶ້ນພາຍໃນ ກັບຜູ້ລົງທຶນຕ່າງປະເທດ ເຊິ່ງຮ່ວມຮ່ວມທຶນກັນດຳເນີນທຸລະກິດ, ມີກຳມະສິດຮ່ວມກັນ ແລະ ສ້າງເປັນຕິນິບຸກຄົນໃໝ່ຂຶ້ນພາຍໃຕ້ກົດໝາຍຂອງ ສປປ ລາວ (ກົດໝາຍວ່າດ້ວຍວິສາຫະກິດ).

ການຈັດຕັ້ງ ແລະ ການເຄື່ອນໄຫວ, ບໍລິຫານຄຸ້ມຄອງ, ສິດ ແລະ ພັນທະຂອງຜູ້ລົງທຶນແບບຮຸ້ນສ່ວນແມ່ນ ຈະຕ້ອງໄດ້ກຳນົດເອົາໄວ້ໃນສັນຍາຮ່ວມທຶນ ຊຶ່ງຜູ້ລົງທຶນໄດ້ເຮັດຂຶ້ນໃນເວລາສ້າງຕັ້ງກິດຈະການຮ່ວມກັນ ຫຼື ໃນກົດລະບຽບຂອງວິສາຫະກິດຂອງຕົນ.

"ໃນການລົງທຶນແບບຮຸ້ນສ່ວນ ລະຫ່ວາງ ຜູ້ລົງທຶນພາຍໃນ ແລະ ຜູ້ລົງທຶນຕ່າງປະເທດນີ້ກົດໝາຍກຳນົດ ໃຫ້ຜູ້ລົງທຶນຕ່າງປະເທດ ຕ້ອງປະກອບທຶນຢ່າງໜ້ອຍສຸດບໍ່ໃຫ້ຫຼຸດ (ສິບສ່ວນຮ້ອຍ) 10% ຂອງທຶນທັງໝົດໃນ ກິດຈະການນັ້ນດ້ວຍ"[3].

**3. ການລົງທຶນທຸລະກິດຮ່ວມຕາມສັນຍາ**

ນິຕິບຸກຄົນຕ່າງປະເທດ ທີ່ມາຮ່ວມທຸລະກິດກັບນິຕິບຸກຄົນພາຍໃນ ດ້ວຍຮູບການທຸລະກິດຕາມສັນຍາຕາມທີ່ໄດ້ກຳນົດໄວ້ໃນມາດຕາ 29, ກົດໝາຍສົ່ງເສີມການລົງທຶນປີ 2016, ຕ້ອງໄດ້ນຳເອົາສັນຍາທີ່ເຊັນຮ່ວມກັນໄປຈົດທະບຽນນຳສຳນັກງານທະບຽນສານກ່ອນ ຫຼັງຈາກນັ້ນຈຶ່ງມາແຈ້ງຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ຫຼື ຂະແໜງແຜນການ ແລະ ການລົງທຶນ ບ່ອນທີ່ນິຕິບຸກຄົນພາຍໃນໄດ້ຮັບອະນຸຍາດສ້າງຕັ້ງ ເພື່ອອອກໜັງສືຢັ້ງຢືນຮັບຮູ້ຕາມກົດໝາຍ.

ລັກສະນະດຳເນີນທຸລະກິດຕາມສັນຍາ ສາມາດເຮັດໄດ້ໃນຮູບການການຮ່ວມມື ໃນຂອບເຂດທີ່ລະບຸໄວ້ຕາມສັນຍາ ເພື່ອແບ່ງປັນຜົນປະໂຫຍດຮ່ວມກັນ ແລະ ບໍ່ມີການສ້າງຕັ້ງເປັນນິຕິບຸກຄົນໃໝ່ຂຶ້ນ ຢູ່ ສປປ ລາວ.

ນິຕິບຸກຄົນພາຍໃນທີ່ໄດ້ລົງນາມໃນສັນຍາທຸລະກິດຮ່ວມຕາມສັນຍາດັ່ງກ່າວ, ຕ້ອງແຈ້ງໃຫ້ຫ້ອງການບໍລິການການລົງທຶນປະຕູດຽວ ເພື່ອຮັບຮອງ ແລະ ຄຸ້ມຄອງຕາມລະບຽບການ ລາຍລະອຽດເບິ່ງກົດໝາຍສົ່ງເສີມການລົງທຶນ ປີ 2016[4].

ການລົງທຶນທຸລະກິດຮ່ວມຕາມສັນຍານີ້ແມ່ນ ການລົງທຶນຮ່ວມກັນລະຫວ່າງນິຕິບຸກຄົນພາຍໃນ ສປປ ລາວ ກັບນິຕິບຸກຄົນຕ່າງປະເທດ ທີ່ໄດ້ກຳນົດໄວ້ໃນສັນຍາຮ່ວມທຶນ.

---

[3] ວິຊາກົດໝາຍວ່າດ້ວຍການລົງທຶນ, ມະຫາວິທະຍາໄລແຫ່ງຊາດ, ຄະນະນິຕິສາດ ແລະ ລັດຖະສາດ 2009-2010, ໜ້າທີ 26.

[4] ກົດໝາຍສົ່ງເສີມການລົງທຶນປີ 2016, ພາກທີIII, ໝວດທີ 1, ມາດຕາ 29

ການລົງທຶນທຸລະກິດຮ່ວມທຶນຕາມສັນຍານີ້ບໍ່ໄດ້ສ້າງຕັ້ງເປັນນິຕິບຸກຄົນໃໝ່ ຫຼື ສ້າງສາຂາຂຶ້ນໃໝ່ຢູ່ໃນ ສປປ ລາວ ມີແຕ່ນຳເອົາທຶນມາຮ່ວມກັນໃນການດຳເນີນກິດຈະການເທົ່ານັ້ນ.

ນິຕິບຸກຄົນພາຍໃນທີ່ໄດ້ຮັບການຮ່ວມທຶນ ກັບນິຕິບຸກຄົນຕ່າງປະເທດ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະ ກຳ ແລະ ການຄ້າ, ຂະແໜງການແຜນການ ແລະ ການລົງທຶນຊາບເພື່ອໃຫ້ຂະແໜງການດັ່ງກ່າວໄດ້ໃຫ້ການຄຸ້ມ ຄອງຕາມລະບຽບການ.

ເພື່ອເຮັດໃຫ້ສັນຍາຮ່ວມທຶນທີ່ນິຕິບຸກຄົນທັງສອງຝ່າຍຮ່ວມກັນນັ້ນມີຜົນທາງດ້ານກົດໝາຍແກ່ຄູ່ສັນຍາ ແລະ ເປັນໄປຕາມລະບຽບການສັນຍາຮ່ວມທຶນຕ້ອງນຳໄດ້ໄປຢັ້ງຢືນຄວາມຖືກຕ້ອງຂອງສັນຍາ ສັນຍາຮ່ວມທຶນອາດຈະກຳນົດຈຳນວນທຶນຫຼືການແກ້ໄຂບັນຫາຕ່າງໆທີ່ຈະຕາມມາກໍສາມາດກະທຳໄດ້ເຊັ່ນກັນ.

**4. ການລົງທຶນຮ່ວມລະຫວ່າງ ລັດວິສາຫະກິດ ແລະ ວິສາຫະກິດເອກະຊົນ**

ການລົງທຶນໃນຮູບການນີ້, ເປັນການລົງທຶນຮ່ວມກັນລະຫວ່າງ ລັດວິສາຫະກິດ ແລະ ວິສາຫະກິດເອກະຊົນ ທີ່ມີສັນຍາຮ່ວມກັນ ຊຶ່ງຝ່າຍໜຶ່ງແມ່ນເປັນວິສາຫະກິດຂອງລັດ ແລະ ອີກຝ່າຍໜຶ່ງແມ່ນວິສາຫະກິດເອກະຊົນທັງ ສອງຝ່າຍໄດ້ເປັນເອກະພາບກັນດຳເນີນທຸລະກິດຮ່ວມກັນ ພາຍໃຕ້ກຳມະສິດຮ່ວມກັນ ແລະ ສ້າງເປັນນິຕິບຸກຄົນ ໃໝ່ພາຍໃຕ້ກົດໝາຍຂອງ ສປປ ລາວ, ເປົ້າໝາຍການລົງທຶນໃນຮູບການນີ້ຕົ້ນຕໍກໍເພື່ອຫວັງຜົນກຳໄລຈາກການຮ່ວມມືການລົງທຶນ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດຮ່ວມກັນ.

ບັນດາການຈັດຕັ້ງ, ເຄື່ອນໄຫວ, ສິດ ແລະ ພັນທະ, ການບໍລິຫານຄຸ້ມຄອງຂອງຜູ້ລົງທຶນຮ່ວມ ແມ່ນຈະມີ ການກຳນົດໄວ້ໃນສັນຍາຮ່ວມ ທຶນຂອງສອງຝ່າຍ ແລະ ພາຍໃຕ້ກົດລະບຽບຂອງນິຕິບຸກຄົນໃໝ່.

**5. ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ການລົງທຶນໃນຮູບການນີ້ ເປັນການລົງທຶນທີ່ແນໃສການຈັດຕັ້ງປະຕິບັດໂຄງການກໍ່ສ້າງໃໝ່, ປັບປຸງພື້ນຖານໂຄງລ່າງ ແລະ ສະໜອງການບໍລິການສາທາລະນະ, ກ່ຽວກັບຂະແໜງການ, ເງື່ອນໄຂ ແລະ ຂັ້ນຕອນການລົງທຶນໃນຮູບການນີ້ແມ່ນມີລະບຽບການສະເພາະກຳນົດໄວ້ຕ່າງຫາກ.

ສັງເກດເຫັນວ່າ ການລົງທຶນ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເປົ້າໝາຍຕົ້ນຕໍແມ່ນເລັງໃສ່ການພັດທະນາສາທາລະນະ ຊຶ່ງມີຄວາມແຕກຕ່າງກັບ ການລົງທຶນລະຫວ່າງລັດວິສາຫະກິດ ແລະ ວິສາຫະກິດເອກະຊົນ ຊຶ່ງເປົ້າ ໝາຍຕົ້ນຕໍແມ່ນເພື່ອຫວັງຜົນກຳໄລ, ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດຮ່ວມກັນ.

ລັດຊຸກຍູ້, ສົ່ງເສີມ ພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ຮ່ວມລົງທຶນກັບພາກລັດ ດ້ວຍການວາງນະໂຍບາຍ, ສ້າງສະພາບແວດລ້ອມ ແລະ ເງື່ອນໄຂອຳນວຍຄວາມສະດວກ, ສະໜອງຂໍ້ມູນຂ່າວສານ ແລະ ການບໍລິການ ເພື່ອໃຫ້ສາມາດລົງທຶນຮ່ວມກັນໃນໂຄງການກໍ່ສ້າງໃໝ່, ປັບປຸງໂຄງລ່າງພື້ນຖານ ຫຼື ສະໜອງການບໍລິການສາທາລະນະໃນຂະແໜງການ, ເງື່ອນໄຂ ແລະ ຂັ້ນຕອນຕາມທີ່ໄດ້ກຳນົດໄວ້ໃນນິຕິກຳທີ່ກ່ຽວຂ້ອງ.

ຫຼັກການກ່ຽວກັບວຽກງານລົງທຶນລົງຫວ່າງ ພາກລັດ ແລະ ພາກເອກະຊົນມີດັ່ງນີ້:

+ ສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ, ສັງຄົມແຫ່ງຊາດ ແລະ ລະບຽບການທີ່ກ່ຽວຂ້ອງ;
+ ຮັບປະກັນການຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໂດຍມີການແບ່ງຄວາມຮັບຜິດຊອບໃນຂະແໜງການທີ່ກ່ຽວຂ້ອງຢ່າງຈະແຈ້ງ;
+ ເປີດເຜີຍຂໍ້ມູນກ່ຽວກັບການແຂ່ງຂັນ, ການປະມູນ, ມູນຄ່າ, ຜົນປະໂຫຍດ ແລະ ຄວາມສ່ຽງໃນການລົງທຶນຮ່ວມລະຫວ່າງພາກລັດ ແລະ ພາກເອກະຊົນ ລວມທັງລະບຽບການທີ່ມີຜົນກະທົບໂດຍກົງຕໍ່ການລົງທຶນດັ່ງກ່າວ;
+ ຮັບປະກັນຜົນປະໂຫຍດສູງສຸດທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມບົນພື້ນຖານການສຶກສາຜົນກະທົບ, ຄວາມເປັນໄປໄດ້ ແລະ ຄວາມຄຸ້ມຄ່າຂອງການລົງທຶນ;

+ ຈັດແບ່ງຄວາມຮັບຜິດຊອບໃນການລົງທຶນຮ່ວມ ລະຫວ່າງ ເຈົ້າຂອງໂຄງການ ແລະ ບໍລິສັດໂຄງການ ໃຫ້ມີຄວາມເໝາະສົມ ລວມທັງຄວາມຮັບຜິດຊອບຕໍ່ການຄຸ້ມຄອງ ແລະ ບໍລິຫານຄວາມສ່ຽງທີ່ອາດເກີດຂຶ້ນ;

+ ຮັບປະກັນການຄຸ້ມຄອງ, ບໍລິຫານການລົງທຶນຮ່ວມດ້ວຍຄວາມສະເໝີພາບ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້;

+ ສົ່ງເສີມການມີສ່ວນຮ່ວມຂອງບຸກຄົນທີ່ເປັນພົນລະເມືອງລາວ, ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນ ປະເທດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

+ ຮັບປະກັນຄວາມໝັ້ນຄົງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

**6. ຮູບແບບ ການລົງທຶນ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ຮູບແບບ ການລົງທຶນ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີດັ່ງນີ້:

+ ອອກແບບ, ກໍ່ສ້າງ, ສະໜອງທຶນ ແລະ ດຳເນີນງານ (**DBFO**);

+ ອອກແບບ, ກໍ່ສ້າງ ແລະ ດຳເນີນງານ (**DBO**);

+ ກໍ່ສ້າງ, ດຳເນີນງານ ແລະ ມອບໂອນ (**BOT**);

+ ກໍ່ສ້າງ, ເປັນເຈົ້າຂອງ, ດຳເນີນງານ ແລະ ໂອນ (**BOOT**);

+ ກໍ່ສ້າງ, ເປັນເຈົ້າຂອງ ແລະ ດຳເນີນງານ (**BOO**);

+ ກໍ່ສ້າງ, ມອບໂອນ ແລະ ດຳເນີນໂຄງການ (**BTO**);

+ ກໍ່ສ້າງ, ເຊົ່າ ແລະ ມອບໂອນໂຄງການ (**BLT**);

+ ກໍ່ສ້າງ ແລະ ມອບໂອນໂຄງການ (**BT**).

**1) ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ອອກແບບ, ກໍ່ສ້າງ, ສະໜອງທຶນ ແລະ ດຳເນີນງານ** (DBFO)

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ອອກແບບ, ກໍ່ສ້າງ, ສະໜອງທຶນ ແລະ ດຳເນີນງານ (**DBFO**) ແມ່ນພາກເອກະຊົນເປັນຜູ້ຮັບຜິດຊອບໃນການອອກແບບ, ການກໍ່ສ້າງ, ການຈັດຫາເງິນທຶນ, ດຳເນີນງານ ແລະ ບຳລຸງຮັກສາໂຄງການດ້ວຍຕົນເອງ ໂດຍມີສັນຍາໃນໄລຍະເວລາ ອັນແນ່ນອນໃດໜຶ່ງ ໂດຍອີງໃສ່ຜົນ ຂອງການສຶກສາບົດວິພາກເສດຖະກິດ ແຕ່ສູງສຸດບໍ່ເກີນ **50** ປີ. ຫຼັງຈາກສິ້ນສຸດສັນຍາແລ້ວ ພາກເອກະຊົນຕ້ອງໂອນ ໂຄງການສຳປະທານ ດັ່ງກ່າວຢູ່ໃນສະພາບດີໃຫ້ລັດຖະບານ ໂດຍບໍ່ຄິດໄລ່ມູນຄ່າຄືນ.

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ອອກແບບ, ກໍ່ສ້າງ, ສະໜອງທຶນ ແລະ ດຳເນີນງານ (**DBFO**) ໃຊ້ໃນການພັດທະນາພື້ນຖານໂຄງລ່າງ ແລະ ການບໍລິການ ທີ່ມີຂະໜາດການລົງທຶນໃຫຍ່ ເຊັ່ນ: ຖະໜົນ, ສະໜາມບິນ, ທາງລົດໄຟ, ພະລັງງານ, ອາຍແກສ-ນ້ຳມັນ, ບໍ່ແຮ່, ແຫຼ່ງທ່ອງທ່ຽວເຂດເສດຖະກິດ ພິເສດ ແລະ ໂຄງການອື່ນໆ.

**2) ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ອອກແບບ, ກໍ່ສ້າງແລະ ດຳເນີນງານ** (DBO)

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ອອກແບບ, ກໍ່ສ້າງ ແລະ ດໍາເນີນງານ (**DBO)** ໂດຍພາກລັດເປັນເຈົ້າຂອງໂຄງການ ແລະ ເປັນຜູ້ຮັບຜິດຊອບໃນການສະໜອງທຶນໃຫ້ແກ່ພາກເອກະຊົນໃນການອອກແບບ ແລະ ການກໍ່ສ້າງ, ພາຍຫຼັງສໍາເລັດການກໍ່ສ້າງ ລັດວ່າຈ້າງເອກະຊົນຄຸ້ມຄອງບໍລິຫານ ແລະ ບໍາລຸງຮັກສາໂຄງການ ໂດຍການເຮັດສັນຍາຮ່ວມກັນໃນໄລຍະເວລາອັນແນ່ນອນໃດໜຶ່ງ ໂດຍອີງໃສ່ຜົນຂອງການສຶກສາບົດວິພາກເສດຖະກິດ ແຕ່ສູງສຸດບໍ່ເກີນ **50** ປີ. ຫຼັງຈາກສິ້ນສຸດສັນຍາແລ້ວ ພາກເອກະຊົນຕ້ອງໂອນໂຄງການສໍາປະທານ ດັ່ງກ່າວຢູ່ໃນສະພາບດີໃຫ້ລັດຖະບານ ໂດຍບໍ່ຄິດໄລ່ມູນຄ່າຄືນ.

ການຊໍາລະສະສາງ ແມ່ນອີງໃສ່ຜົນຂອງການຈັດຕັ້ງປະຕິບັດໂຄງການຕົວຈິງຕາມມາດຕະຖານ ແລະ ເງື່ອນໄຂທີ່ໄດ້ກໍານົດໄວ້ໃນສັນຍາ.

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບອອກແບບ, ກໍ່ສ້າງ ແລະ ດໍາເນີນງານ (**DBO)** ໃຊ້ໃນໂຄງການພັດທະນາໂຄງລ່າງພື້ນຖານ ແລະ ການບ ລິການຂະໜາດກາງ.

**3) ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ດໍາເນີນງານ ແລະ ມອບໂອນ (**BOT)

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ດໍາເນີນງານ ແລະ ມອບໂອນ (**BOT)** ແມ່ນພາກລັດໃຫ້ສິດສໍາປະທານໂຄງການໃຫ້ແກ່ພາກເອກະຊົນໃນໄລຍະເວລາອັນແນ່ນອນໃດໜຶ່ງໂດຍອີງໃສ່ຜົນຂອງການສຶກສາບົດວິພາກເສດຖະກິດ ແຕ່ສູງສຸດບໍ່ເກີນ **50** ປີ ໂດຍພາກເອກະຊົນເປັນຜູ້ຮັບຜິດຊອບສະໜອງທຶນໃນການກໍ່ສ້າງ ແລະ ດໍາເນີນໂຄງການ. ຫຼັງຈາກສິ້ນສຸດສັນຍາແລ້ວ ພາກເອກະຊົນຕ້ອງໂອນໂຄງການສໍາປະທານ ດັ່ງກ່າວຢູ່ໃນສະພາບດີໃຫ້ລັດຖະບານ ໂດຍບໍ່ຄິດໄລ່ມູນຄ່າຄືນ.

ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ດໍາເນີນງານ ແລະ ມອບໂອນ (**BOT)** ໃຊ້ໃນການລົງທຶນພັດທະນາໂຄງການພື້ນຖານໂຄງລ່າງ ແລະ ການບ ລິການ ໂຄງການລົງທຶນຂະໜາດກາງ ແລະ ຂະໜາດໃຫຍ່.

**4) ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ, ດໍາເນີນງານ ແລະ ມອບໂອນ** (BOOT)

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ດໍາເນີນງານ, ເປັນເຈົ້າ ຂອງ ແລະ ມອບໂອນ (**BOOT)** ໂດຍພາກລັດໃຫ້ສິດສໍາປະທານໂຄງການໃຫ້ແກ່ພາກເອກະຊົນໃນໄລຍະເວລາອັນແນ່ນອນໃດໜຶ່ງ ໂດຍອີງໃສ່ຜົນຂອງການສຶກສາບົດວິພາກເສດຖະກິດ ແຕ່ສູງສຸດບໍ່ເກີນ 50 ປີ, ໂດຍພາກເອກະຊົນເປັນຜູ້ຮັບຜິດຊອບສະໜອງທຶນໃນການກໍ່ສ້າງ, ຫຼັງຈາກນັ້ນເປັນເຈົ້າຂອງ ແລະ ດໍາເນີນໂຄງການ, ຫຼັງຈາກສິ້ນສຸດສັນຍາແລ້ວ ພາກເອກະຊົນຕ້ອງໂອນໂຄງການສໍາປະທານ ດັ່ງກ່າວຢູ່ໃນສະພາບດີໃຫ້ລັດຖະບານ ໂດຍບໍ່ຄິດໄລ່ມູນຄ່າຄືນການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ດໍາເນີນງານ, ເປັນເຈົ້າຂອງ ແລະ ມອບໂອນ (**BOOT)** ໃຊ້ໃນການພັດທະນາໂຄງການໂຄງລ່າງພື້ນຖານ ແລະ ການບໍລິການຂະໜາດນ້ອຍ ແລະ ຂະໜາດກາງ.

**5) ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ ແລະ ດໍາເນີນງານ** (BOO)

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ ແລະ ດຳເນີນງານ (**BOO**) ເປັນການລົງທຶນຂອງພາກເອກະຊົນເອງ ຊຶ່ງຜູ້ລົງທຶນດຳເນີນໂຄງການຢ່າງເປັນເອກະລາດ ແຕ່ລັດຖະບານໃຫ້ນະໂຍບາຍດ້ານ ພາສີ- ອາກອນ ແລະ ການສະໜັບສະໜູນດ້ານຕ່າງໆຕາມກົດໝາຍ ແລະ ລະບຽບການ. ໂດຍອີງໃສ່ຜົນຂອງການສຶກສາບົດວິພາກເສດຖະກິດ ແຕ່ສູງສຸດບໍ່ເກີນ 50 ປີ.

ການລົງທຶນໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ ແລະ ດຳເນີນງານ (**BOO**) ນຳໃຊ້ໃນຂະແໜງກໍ່ສ້າງໂຄງລ່າງພື້ນຖານ, ຂະແໜງບໍລິການ ແລະ ໂຄງການລົງທຶນ ຂະໜາດກາງ ແລະ ຂະໜາດໃຫຍ່.

**6) ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ມອບໂອນແລະ ດຳເນີນງານ (**BTO)

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ມອບໂອນ ແລະ ດຳເນີນງານ (**BTO**) ແມ່ນ ພາກເອກະຊົນເປັນຜູ້ອອກແບບ ແລະ ກໍ່ສ້າງ ດ້ວຍທຶນຂອງຕົນເອງ ແລະ ຫຼັງຈາກສິ້ນສຸດການກໍ່ສ້າງ ພາກເອກະຊົນຕ້ອງມອບໂຄງການໃຫ້ພາກລັດ. ຫຼັງຈາກນັ້ນ ພາກລັດຈຶ່ງໃຫ້ພາກເອກະຊົນ ເຊົ່າໂຄງລ່າງ ຫຼື ກິດຈະການ ດັ່ງກ່າວ ດ້ວຍການເຮັດສັນຍາເຊົ່າຮ່ວມກັນ ໃນໄລຍະເວລາອັນແນ່ນອນໃດໜຶ່ງ ໂດຍອີງໃສ່ຜົນຂອງການສຶກສາບົດວິພາກເສດຖະກິດ ແຕ່ສູງສຸດ ບໍ່ເກີນ 50 ປີ.

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ມອບໂອນ ແລະ ດຳເນີນງານ (**BTO**) ໃຊ້ໃນການກໍ່ສ້າງພື້ນຖານໂຄງລ່າງ ແລະ ການບໍລິການ ໃນທຸກຂະໜາດ.

**7) ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເຊົ່າ ແລະ ມອບໂອນໂຄງການ (**BLT)

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເຊົ່າ ແລະ ມອບໂອນໂຄງການ (**BLT**) ແມ່ນ ພາກເອກະຊົນເປັນຜູ້ອອກແບບ ແລະ ກໍ່ສ້າງ ດ້ວຍທຶນຂອງຕົນເອງ, ຫຼັງຈາກສິ້ນສຸດການກໍ່ສ້າງ ພາກເອກະຊົນເຮັດສັນຍາເຊົ່າໂຄງລ່າງ ຫຼື ກິດຈະການກັບພາກລັດ ໃນໄລຍະເວລາອັນແນ່ນອນໃດໜຶ່ງ ແຕ່ສູງສຸດ ບໍ່ເກີນ 50 ປີ. ຫຼັງຈາກສິ້ນສຸດສັນຍາເຊົ່າ ພາກເອກະຊົນ ຕ້ອງສົ່ງຄືນ ໂຄງການ ຫຼື ກິດຈະການຄືນໃຫ້ພາກລັດ.

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເຊົ່າ ແລະ ມອບໂອນໂຄງການ (**BLT**) ໃຊ້ໃນການກໍ່ສ້າງໂຄງລ່າງພື້ນຖານ ແລະ ການບໍລິການໃນທຸກຂະໜາດ.

**8) ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ ແລະ ມອບ ໂອນໂຄງການ (**BT)

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ ແລະ ມອບໂອນໂຄງການ (**BT)** ແມ່ນ ພາກລັດເປັນຜູ້ສະໜອງທຶນ ໃນການອອກແບບ ແລະ ກໍ່ສ້າງ, ໂດຍການວ່າຈ້າງໃຫ້ພາກເອກະຊົນ ເປັນຜູ້ອອກແບບ ແລະ ກໍ່ສ້າງ, ເມື່ອກໍ່ສ້າງສຳເລັດມອບໂອນໃຫ້ພາກລັດເປັນເຈົ້າຂອງໂຄງການ ແລະນຳໃຊ້ ຫຼື ດຳເນີນງານເລີຍ, ພາກລັດຕ້ອງໄດ້ຊຳລະຄືນໃຫ້ຜູ້ຮັບເໝົາການກໍ່ສ້າງຕາມທີ່ໄດ້ກຳນົດໄວ້ໃນສັນຍາ.

**7. ຂັ້ນຕອນການລົງທຶນໃນບັນດາຮູບການ ການລົງທຶນ:**

+ **ຂັ້ນຕອນ ທີ 1**

ຂໍໃບອະນຸຍາດການລົງທຶນ ແລະ ທະບຽນວິສາຫະກິດ ຈາກໜ່ວຍງານປະຕູດຽວ, ກົມສົ່ງເສີມການລົງທຶນ ກະຊວງແຜນການ ແລະ ການລົງທຶນ

ຜູ້ລົງທຶນຄວນມີລາຍການເອກະສານດັ່ງລຸ່ມນີ້:

1) ຄໍາຮ້ອງຂໍສ້າງຕັ້ງບໍລິສັດ (ຈາກໜ່ວຍງານປະຕູດຽວ);

2) ກົດລະບຽບຂອງບໍລິສັດ;

3) ບົດວິພາກເສດຖະກິດ-ເຕັກນິກ /ແຜນການດໍາເນີນທຸລະກິດ;

4) ສັນຍາ ຫຼື ຂໍ້ມູນພົນທະຕ່າງໆລະຫວ່າງຜູ້ລົງທຶນ (ກໍລະນີວິສາຫະກິດປະສົມພາຍໃນ ແລະ ຕ່າງປະເທດ);

5) ເອກະສານຊ້ອນທ້າຍ;

ສໍາເນົາຊີວະປະຫວັດຫຍໍ້ ແລະ ປັດສປອດ ຂອງຜູ້ລົງທຶນ (ສໍາລັບຄົນຕ່າງປະເທດ), ຖ້າຫາກວ່າ ຜູ້ລົງທຶນເປັນຄົນລາວ ຕ້ອງມີສໍາເນົາບັດປະຈໍາຕົວ, ສໍາເນົາສໍາມະໂນຄົວ ແລະ ຮູບຖ່າຍ 3×4 ຈໍານວນ 6 ແຜ່ນ;

6) ໃບຢັ້ງຢືນຖານະການເງິນ ຂອງຜູ້ລົງທຶນ;

7) ໃບມອບສິດຈາກເຈົ້າຂອງຜູ້ລົງທຶນ ແລະ ມອບສິດໃຫ້ຜູ້ດໍາເນີນເອກະສານແທນ (ຖ້າມີ).

+ **ຂັ້ນຕອນ ທີ 2**

ຂໍໃບທະບຽນອາກອນ

ລາຍການເອກະສານທີ່ຕ້ອງການມີດັ່ງລຸ່ມນີ້:

1) ໃບສະໝັກເຖິງກົມອາກອນ ເພື່ອຂໍລົງທະບຽນອາກອນ;

2) ໃບດຸ່ນດ່ຽງເລີ່ມຕົ້ນ;

3) ສໍາເນົາໃບອະນຸຍາດການລົງທຶນ;

4) ສໍາເນົາທະບຽນວິສາຫະກິດ;

5) ໃບຢັ້ງຢືນຖານະການເງິນ ຈາກທະນາຄານ;

6) ລາຍຊື່ຂອງພະນັກງານ/ຜູ້ອອກແຮງງານ ທີ່ຖືກຈ້າງໂດຍບໍລິສັດ

+ **ຂັ້ນຕອນ 3**

ຂໍກາຈ້ໍາບໍລິສັດ

ລາຍການເອກະສານທີ່ຕ້ອງການມີດັ່ງລຸ່ມນີ້:

1) ສໍາເນົາໃບອະນຸຍາດການລົງທຶນ;

2) ສໍາເນົາທະບຽນວິສາຫະກິດ;

3) ສໍາເນົາໃບທະບຽນອາກອນ;

4) ໜ່ວຍງານປະຕູດຽວ.

ໜ່ວຍງານປະຕູດຽວ, ກະຊວງແຜນການ ແລະ ການລົງທຶນ ຈະເອື້ອອຳນວຍຄວາມສະດວກຮອບດ້ານໃຫ້ແກ່ຜູ້ລົງທຶນໂດຍໃຫ້ບໍລິການຂໍ້ມູນຂ່າວສານ, ການພິຈາລະນາການລົງທຶນ, ການອອກໃບທະບຽນວິສາຫະກິດ ແລະ ກ່ຽວກັບຂັ້ນຕອນການລົງທຶນ.

**References:**


1. ກົດໝາຍສົ່ງເສີມການລົງທຶນປີ 2009;
2. ກົດໝາຍສົ່ງເສີມການລົງທຶນ 2016;
3. ຕຳລາຮຽນວິຊາກົດໝາຍວ່າດ້ວຍການລົງທຶນ, ມະຫາວິທະຍາໄລແຫ່ງຊາດ, ຄະນະນິຕິສາດ ແລະ ລັດຖະສາດ 2009-2010, ໜ້າທີ 26;
4. ຕຳລາຮຽນວິຊາກົດໝາຍສົ່ງເສີມການລົງທຶນ, ສະຖາບັນຍຸຕິທຳແຫ່ງຊາດ, ປີ 2021.